ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ອີທີແອລ ມະຫາຊົນ

ສະຫະກອນ ອອມຊັບ-ສິນເຊື່ອ ອທອ

ເລກທີ 146/ສອສ.ອທອ

ວັນທີ 21/12/2018

# ແຈ້ງການ

ເຖິງ: ບັນດາພະແນກ, ສາຂາ ອທອ ປະຈຳແຂວງ ແລະ ສະມາຊິກ ສອສ.

ເລື່ອງ: ການໃຫ້ກູ້ຢືມ, ການປ່ຽນແປງຮຸ້ນງວດ 12 ເດືອນປີ 2019

- ອີງຕາມກົດລະບຽບພາຍໃນຂອງສະຫະກອນ ອອມຊັບ-ສິນເຊື່ອ ອທອ ສະບັບເລກທີ: 005/ສອສ, ລົງວັນທີ 28/01/2013.
- ອີງຕາມບົດບັນທຶກກອງປະຊຸມຂອງຄະນະບໍລິຫານງານ ສອສ ລົງວັນທີ 30/10/2018.
- ອີງຕາມ ໃບແຈ້ງການ ຂອງກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ຕາມແຈ້ງການສະບັບເລກທີ 554/ກຄສງ,ລົງວັນທີ 13/12/2017 ວ່າດ້ວຍການຢັ້ງຢືນຄວາມຖືກຕ້ອງການບັນຊີກ່ອນການຈ່າຍເງິນປັນຜົນໃຫ້ສະມາຊິກ.

ຜູ້ອຳນວຍການ ສະຫະກອນອອມຊັບ-ສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງມາຍັງບັນດາພະແນກ, ສາຂາ ອທອ ປະຈຳແຂວງເພື່ອແຈ້ງຕໍ່ສະມາຊິກ ສອສ ທຸກທ່ານຊາບ ການເພີ່ມ, ຫຼຸດ, ຖອນຮຸ້ນ ໃນງວດ 12 ເດືອນ ປີ 2019 ດັ່ງນີ້ :

1. ການກູ້ຢືມ:

ສະຫະກອນອອມຊັບ-ສິນເຊື່ອ ອທອ ຈະຂໍຢຸດໂຈະການປ່ອຍກູ້ຊົ່ວຄາວ ແຕ່ ວັນທີ 25-31/12/2018 ເພື່ອເອກະພາບດ້ານຕົວເລກທຸລະກິດ ແລະ ຈະເປີດ ການປ່ອຍກູ້ເປັນປົກກະຕິ ໃນວັນທີ 02/01/2019 ເປັນຕົ້ນໄປ.

2. ການປ່ຽນແປງຮຸ້ນ:

2.1 ເປີດຮັບສະໝັກສະມາຊິກ ສອສ ໃໝ່ ທີ່ມີເງື່ອນໄຂດັ່ງນີ້: ພະນັກງານຖາວອນ, ພະນັກງານທົດລອງວຽກ.

2.2 ການຖອກຮຸ້ນ: ຕ່ຳສຸດ 1 ຮຸ້ນ = 10,000 ກີບ/ຄົນ/ເດືອນ ແລະ ສູງສຸດ 50 ຮຸ້ນ = 500,000 ກີບ/ຄົນ/ເດືອນ.

2.3 ການຖອນຮຸ້ນ: ໃຫ້ສະມາຊິກຮັກສາຮຸ້ນໄວ້ນຳ ສອສ ບໍ່ໃຫ້ຫຼຸດ 10 ຮຸ້ນ =100,000 ກີບ.

2.4 ສະມາຊິກຜູ້ທີ່ມີຈຸດປະສົງຖອນຮຸ້ນ ຫຼື ເພີ່ມ/ຫຼຸດ ໃຫ້ປະກອບແບບຟອມ ສົ່ງໃຫ້ ທ່ານ ນ. ສີສຸພັນ ແກ້ວມະນີວົງ ຂາເຂົ້າ-ຂາອອກ ຂອງ ສອສ ຜ່ານລະບົບ Report ໃໝ່ພະແນກ ບໍລິຫານ, ເບີໂທ 22210090.

2.5 ກຳນົດເວລາຮັບຟອມ ເລີ້ມແຕ່ ວັນທີ 26/12/2018- 04/01/2019, ສະມາຊິກ ສອສ ສາມາດກວດຮຸ້ນສະສົມໄດ້ທີ່ທາງ Website : scc.etllao.com

2.6 ກຳນົດການຈ່າຍເງິນຖອນຮຸ້ນ ວັນທີ 23-25/01/2019.

2.7 ກໍລະນີພະນັກງານຂອງທ່ານຫາກອອກໄປປະຕິບັດວຽກງານຢູ່ຕ່າງແຂວງໃນໄລຍະປະກາດການເພີ່ມ/ຫຼຸດ ແລະ ສະໝັກ ໃໝ່ ແມ່ນໃຫ້ທ່ານພົວພັນຫາສະມາຊິກຂອງທ່ານໃຫ້ປະກອບແບບຟອມໃຫ້ທັນເວລາດັ່ງກ່າວ. ຖ້າຊັກຊ້າຖືວ່າສະລະສິດ.

2.8 ຄ່າທຳນຽມ ປ່ຽນແປງຮຸ້ນ 5,000ກີບ/ສະບັບ.

2.9 ຄ່າສະໝັກສະມາຊິກ ສອສ ໃໝ່ແມ່ນ 10,000 ກີບ/ສະບັບ

3. <u>ການປັນຜົນງວດ 12 ເດືອນປີ 2018</u>

ສຳລັບການປັນຜົນ 12 ເດືອນປີ 2018 ແມ່ນຫຍັງລໍຖ້າການກວດກາຜົນປະກອບການຈາກ ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປລາວ ຕາມແຈ້ງການ ສະບັບເລກທີ 554/ກຄສງ,ລົງວັນທີ 13/12/2017 ວ່າດ້ວຍການຢັ້ງຢືນຄວາມຖືກຕ້ອງການບັນຊີກ່ອນການຈ່າຍເງິນປັນຜົນໃຫ້ສະມາຊິກ.

4. <u>ວິທີຈັດຕັ້ງປະຕິບັດ:</u>

1. ການໂອນເງິນຖອນຮຸ້ນ, ຫລຸດຮຸ້ນ ຈະປະຕິບັດຕາມເລກບັນຊີ ທະນາຄານຂອງສະມາຊິກທີ່ໄດ້ແຈ້ງໃຫ້ ສອສ ຄື: ນະຄອນຫຼວງວຽງຈັນ, ສາຂາແຂວງແມ່ນໂອນຜ່ານເລກບັນຊີ ທະນາຄານ ພັດທະນາລາວ ຫຼື ການຄ້າຕ່າງປະເທດ ຫຼື ລາວຫວຽດ. ຫຼີກເວັ້ນການໂອນເຂົ້າບັນຊີຂອງຜູ້ອື່ນ ແລະ ບັນຊີຂອງທະນາຄານ ພົງສະຫວັນ ເພາະຈະໄດ້ເສຍຄ່າໂອນແຕ່ລະຄັ້ງ.
2. ສຳລັບ ສະມາຊິກໃໝ່ ໃຫ້ສົ່ງເລກບັນຊີທະນາຄານທີ່ອອກຊື່ຂອງຜູ້ກ່ຽວມາດ້ວຍ

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຜູ້ອຳນວຍການ ສອສ

ບໍລິສັດ ອີທີແອລ ມະຫາຊົນ
ສະຫະກອນອອມຊັບ-ສິນເຊື່ອ

Val

ວັດທະນາ ວົງເຫວັນ